ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ກະຊວງກະສິກຳ ແລະ ປ່າໄມ້**

**ໂຄງການພັດທະນາຊົນນະບົດຮອບດ້ານ ຮ່ວມມື ລາວ-ຝຣັ່ງເສດ (PCADR)**

ຈຸດປະຕິບັດງານເຂດ 4 ເມືອງໃຕ້ ແຂວງໄຊຍະບູລີ (**PASS**)

---

# ກິດຈະກຳເຜີຍແຜ່

# ບັນດາເຕັກນິກປູກໂດຍກົງ ໂດຍໄຊ້ພືດຄຸມດິນ

---

# ກິດຈະກຳ 1

## ເຜີຍແຜ່ ບັນດາເຕັກນິກ ປູກໂດຍກົງ ໂດຍໄຊ້ພືດຄຸມດິນ.

---

1. **ບັນດາຂັ້ນຕອນ ເພື່ອຈັດຕັ້ງປະຕິບັດກິດຈະກຳ**

**ຂັ້ນຕອນ 1**: ສ້າງບັນດາເຄື່ອງມື,ອຸປະກອນຮັບໃຊ້ການຝຶກອົບຮົມ,ປຸກລະດົມ ແລະ ໜ້າວຽກສົ່ງເສີມ.

ບັນດາເອກະສານເຄື່ອງມື/ອຸປະກອນຮັບໃຊ້ວຽກຝຶກອົບຮົມວຽກສົ່ງເສີມ. ມີຈຸດປະສົງຂັ້ນທຳອິດ ເພື່ອແນ່ໃສ່ຝຶກສ້າງພະນັກງານສົ່ງເສີມຂອງໂຄງການ PASS (ບັນດາພະນັກງານວິຊາການມາຈາກ ກະສິກຳ ແລະ ປ່າໄມ້ເມືອງ). ຈາກນັ້ນກໍຈະນຳລົງໄປເຜີຍແຜ່ກິດຈະກຳ ຂອງ ໂຄງການ PASS ແລະ ປຸກລະດົມ ຂົນຂວຍບັນດາຊາວກະສິກອນ ໃນຂັ້ນບ້ານເພື່ອແນ່ໃສ່ການເຮັດວຽກຈັດຕັ້ງກຸ່ມຜະລິດ.

- ສຳລັບ ກິດຈະກຳ ທີ່ຈະລົງໄປເຜີຍແຜ່ທາງດ້ານປູກພືດໂດຍກົງຜ່ານພືດຄຸມດິນປະກອບມີ 3 ຫົວເລື່ອງທີ່ອາດຈະນຳໄປຜັນຂະຫຍາຍ.
  - ⇨ ບັນດາຫຼັກການຂອງວຽກ Agro –techniques des SCV
  - ⇨ ບັນດາພົນໄດ້ຮັບທາງດ້ານAgro–Economiques des SCV ແລະການສົມທຽບຄວາມແຕກຕ່າງກັນລະຫ່ວາງວິທີການປູກແບບ SCV ກັບວິທີການປູກຕາມທີ່ເຄີຍປະຕິບັດ ມາກ່ອນນັ້ນ.(ຕາມແບບ traditionnels)
  - ⇨ ການນຳໃຊ້ຢາຂ້າຫ້ຍາແບບສົມເຫດສົມຜົນ (ຮູ້ວິທີໃຊ້ຢາຂ້າຫຍ້າແບບຖືກຕ້ອງ).

**ຂັ້ນຕອນ 2** : **ໜ້າວຽກຝຶກອົບຮົມວິຊາການເມືອງ**

ຝຶກອົບຮົມວິຊາການເມືອງ ໃຫ້ຮູ້ຈັກກ່ຽວກັບເຕັກນິກຂອງວຽກສົ່ງເສີມກະສິກຳ :

- ⇨ ສ້າງໃຫ້ເກີດຄວາມເປັນເອກະພາບກັນທາງດ້ານຄວາມຮັບຮູ້ ແລະ ເຂົ້າໃຈບັນດາຫຼັກການສຳຄັນ ແລະບັນດາເຕັກນິກຂັ້ນພື້ນຖານຂອງວຽກ SCV ເພື່ອເຮັດໃຫ້ວິຊາການເມືອງທຸກໆຄົນເລີ່ມຮັບຮູ້ ແລະ ເຂົ້າໃຈແບບດຽວກັນສຳລັບຜູ້ທີ່ຈະລົງໄປເຜີຍແຜ່ວຽກສົ່ງເສີມຂັ້ນບ້ານ.
- ⇨ ຝຶກອົບຮົມໃຫ້ຮູ້ວິທີໃຊ້ເຄື່ອງມື/ອຸປະກອນການຝຶກ ແລະ ສາມາດຄຸມຄອງເປັນເຈົ້າການ ກ່ຽວກັບການໃຊ້ເຄື່ອງມືຝຶກອົບຮົມ.

**ຂັ້ນຕອນ3** : **ການສະເໜີບັນດາກິດຈະກຳຢູ່ໃນບ້ານເປົ້າໝາຍ.**

**ວຽກດຳເນີນຈັດປະຊຸມຊາວບ້ານກ່ຽວກັບ**_" ສະເໜີກິດຈະກຳໃຫ້ກຸ່ມຊາວກະສິກອນ ປູກພືດໂດຍກົງຜ່ານພືດຄຸມດິນ(SCV) " :

⇨ ປຸກລະດົມຂົນຂວາຍບັນດາຊາວກະສິກອນໃຫ້ຮູ້ຈັກເຕັກນິກ SCV ( ບັນດາຫຼັກການທາງດ້ານ Agro–technique ແລະ ບັນດາຜົນໄດ້ຮັບຜ່ານມາທາງດ້ານ Agro–Economiqves ຂອງເຕັກນິກ SCV ).

⇨ ສະເໜີແຈ້ງໃຫ້ຊາວກະສິກອນໃນບ້ານຮັບຮູ້ວ່າ ໂຄງການ PASS ຈະຮັບຊຸກຍູ້ສະນັບສະໜູນສໍາລັບກຸ່ມຊາວກະສິກອນໃນເຂດຕ່າງໆໃຫ້ຮັບຊາບການຊຸກຍູ້ຂອງໂຄງການທາງດ້ານ:

- ຊຸກຍູ້ແນະນໍາທາງດ້ານວິຊາການເຕັກນິກ
- ຊຸກຍູ້ທາງດ້ານການສະໜອງກົນຈັກການຜະລິດ
- ຊຸກຍູ້ທາງດ້ານວັດຖຸຮັບໃຊ້ການປູກຝັງ.

⇨ ຮັບຄໍາຮ້ອງຂໍຂອງຊາວບ້ານເພື່ອເຂົ້າຝຶກອົບຮົມກ່ຽວກັບກຸ່ມປູກພືດ SCV .

**<u>ຂັ້ນຕອນ 4</u> : ການຈັດຕັ້ງກຸ່ມ/ໂຄງສ້າງຂອງບັນດາກຸ່ມຕ່າງໆ.**

⇨ ເລືອກເອົາຄອບຄົວ ແລະ ເນື້ອທີ່ແປງປູກ.

⇨ ຈັດຕັ້ງ "ກຸ່ມເຮັດວຽກ" ຂຶ້ນພາຍໃນກຸ່ມຊາວກະສິກອນໂດຍອີງ ຕາມຂະໜາດຂອງກຸ່ມ, ສະພາບທີ່ຕັ້ງທາງດ້ານພູມສາດທີ່ສິ່ງແວດລ້ອມ (ສະພາບດິນ,ສະພາບຫຍ້າ) ແລະ ອີງຕາມເຄື່ອງມືຮັບໃຊ້ກະສິກໍາທີ່ມີໃນກຸ່ມບ້ານ (ບັ້ງພົ່ນຢາ, ເຄື່ອງມືຢອດເມັດ, ເຄື່ອງຈັກລົດອີ່ແຕນ...)

⇨ ເຮັດວຽກຮ່ວມກັບບັນດາພໍ່ຄ້າ ເພື່ອສະໜອງປັດໄຈການຜະລິດຕ່າງໆ ແລະ / ຫຼືກ່ຽວກັບ ລະບົບການໃຊ້ສິນເຊື່ອລະດູການປູກຝັງຂອງບັນດາພໍ່ຄ້າ.

**<u>ຂັ້ນຕອນ 5</u> : ຝຶກອົມຮົມເພື່ອແນໃສ່ສ້າງວິຊາການນໍາພາຢູ່ຂັ້ນບ້ານ.**

ບັນດາບຸກຄົນທີ່ຈະກາຍເປັນຜູ້ຊີ້ນໍາໃຫ້ຄວາມຮູ້ຢູ່ຂັ້ນບ້ານ ເອີ້ນວ່າ "ບຸກຄົນຫຼັກແຫຼ່ງ" ພາຍໃນບ້ານ, ບັນດາບຸກຄົນເຫຼົ່ານັ້ນຈະຕ້ອງໄດ້ຮັບການຝຶກອົບຮົມຢ່າງນ້ອຍ 10 ມື້, ຕົ້ນຕໍແມ່ນໃສ່ ວິຊາການ ດ້ານການໃຊ້ຢາຂ້າຫຍ້າ, ການສີດຢາ ແລະ ອື່ນໆ.

ຫຼັງຈາກຮັບການຝຶກອົບຮົມແລ້ວ, ບຸກຄົນເຫຼົ່ານັ້ນ ກໍຈະກາຍເປັນວິຊາການປະຈໍາຂັ້ນບ້ານເພື່ອຊີ້ນໍາ, ໃຫ້ຂໍ້ແນະນໍາແກ່ສະມາຊິກກຸ່ມຊາວກະສິກອນ ໃຫ້ຮູ້ເຜີຍແຜ່ເຕັກນິກການນໍາໃຊ້ຢາຂ້າຫຍ້າ ແລະ ວິທີການຢ່າງທົ່ວເຖິງ, ບັນດາບຸກຄົນເຫຼົ່ານີ້ກໍຈະໄດ້ມີຄ່າຕອບແທນເລັກໆນ້ອຍໆ.

ດັ່ງນັ້ນ, ຍັງຈະຕ້ອງໄດ້ອີງໃສ່ ອ.ສ.ບ ARAP ທີ່ໂຄງການໄດ້ສ້າງມາແລ້ວເປັນຜູ້ ທີ່ຄວນໄດ້ຮັບການຝຶກອົບຮົມ ແລະ ສືບຕໍ່ນໍາໃຊ້ເຂົາເຈົ້າ ພາຍໃນບັນດາບ້ານເປົ້າໝາຍ.

ຂັ້ນຕອນ 6 : ຊຸກຍູ້ດ້ານເຕັກນິກ ແລະ ຕິດຕາມ.

- ⇨ ໜ້າວຽກຝຶກອົບຮົມການນຳໃຊ້ຢາຂ້າຫ້ຍາແບບລົມເທດລົມຜົນ (ການຝຶກອົບຮົມໂດຍໃຊ້ອຸປະກອນການຝຶກທີ່ມີແລ້ວ, ທີ່ສ້າງມາແລ້ວອາດຈະໃຫ້ຊາວກະສິກອນເປັນຜູ້ຝຶກຕໍ່ກໍໄດ້ ຫຼື ຈະໃຫ້ພະນັກງານ ວິຊາການສົ່ງເສີມເປັນຄູຝຶກກໍໄດ້).
- ⇨ ສາທິດກ່ຽວກັບການໃຊ້ຢາຂ້າຫ້ຍາ, ການສີດຢາຂ້າຫ້ຍາ ຢູ່ສວນສາທິດຕົວຈິງຂອງກຸ່ມ SCV.
- ⇨ ເຮັດວຽກກວດກາຢ່າງເຂັ້ມງວດ ກ່ຽວກັບວິທີນຳໃຊ້ຢາຂ້າຫ້ຍາ ໂດຍແມ່ນບຸກຄົນ ອ.ສ.ບ ຂອງບ້ານທີ່ໄດ້ຮັບການກໍ່ສ້າງມາແລ້ວເປັນຜູ້ກວດກາຄັກແນ່ກ່ຽວກັບວິທີໃຊ້ຢາຂ້າຫ້ຍາຂອງຊາວບ້ານພາຍໃນກຸ່ມບ້ານເປົ້າໝາຍໃນທຸກໆກຸ່ມ.
- ⇨ ຕິດຕາມຜົນໄດ້ຮັບຈາກການສີດຢາຂ້າຫ້ຍາ ແລະ ໃຫ້ຂໍ້ແນະນຳທີ່ເຫດເໝາະກັບສະຖານະການຕົວຈິງ ຂອງແຕ່ລະເຂດ-ແຕ່ລະບ່ອນ.
- ⇨ ໃຫ້ຂໍ້ແນະນຳດ້ານເຕັກນິກກ່ຽວກັບແນວພັນ ແລະ ຕິດຕາມແປງສວນປູກຂອງຊາວບ້ານ.

ໃນສະພາບຕົວຈິງແລ້ວ, ວິຊາການເມືອງອາດຈະບໍ່ມີເວລາພຽງພໍເພື່ອລົງຕິດຕາມສວນໄຮ່ປູກພືດ ຂອງຊາວບ້ານ, ຈະຕ້ອງໄດ້ນຳໃຊ້ບຸກຄົນພາຍໃນບ້ານ (ອ.ສ.ບ) ປາບສັດຕູພືດຂອງບ້ານ ທີ່ມີໃນແຕ່ລະກຸ່ມເປັນຜູ້ມີບົດບາດສຳຄັນເຮັດວຽກປະສານງານລະຫ່ວາງສາມາຊິກກຸ່ມກັບວິຊາການ, ເພື່ອເຮັດໃຫ້ການລົງເຮັດວຽກຂອງວິຊາການມີປະສິດຕິຜົນດີຂື້ນ, ສາມາດຕອບສະໜອງບົດບາດຄວາມຕ້ອງການພາຍໃນບ້ານໄດ້ຢ່າງຖືກຕ້ອງ, ເຫັນວ່າມີຄວາມຈຳເປັນຈະຕ້ອງຮິບໂຮມບັນຫາທີ່ຄ້າຍຄືກັນ ເພື່ອເຮັດໃຫ້ ພະນັກງານວິຊາການສົ່ງເສີມ ໄດ້ລົງມາເຮັດສາທິດທົດລອງເຕັກນິກແຕ່ລະເລື່ອງ. (ເຊັ່ນ : ສ່ວນປະສົມຂອງຢານ້ອຍ ຫຼື ຫຼາຍ ຖ້າຫຼຽບໃສ່ຫຍ້າ ຫຼື ຈະໄດ້ສີດຄືນອີກຈັກເທື່ອ, ບັນຫາການປູກ ແລະ ອື່ນໆ...).

## 2. ບັນດາຍຸດທະສາດທີ່ຈະນຳໃຊ້ໃຫ້ສອດຄອງກັບແຕ່ລະເຂດແຕກຕ່າງກັນ.

ໂຄງການ PASS ຈະນຳໃຊ້ແນວທາງຍຸດທະສາດ ຊຸກຍູ້ບັນດາເຕັກນິກ ໃຫ້ສອດຄອງກັບສະພາບຂອງຂະບວນການປູກຝັງໂດຍອີງໃສ່ຈຸດພິເສດຂອງສະພາບເງື່ອນໄຂຂອງດິນປູກຝັງແລະສະພາບພູມປະເທດຂອງເຂດດັ່ງກ່າວ.

ເຂດເບີ 1 : ກວມເອົາພາກໃຕ້ຂອງເຂດປາກລາຍ ແລະ ເຂດບັນດາບ້ານຕາມເສັ້ນທາງບັນດົງ-ຫ້ວຍບູຮາ (9 ບ້ານ).

ວຽກຊຸກຍູ້ດ້ານເຕັກນິກ :

- ສະມາຊິກໃນແຕ່ລະກຸ່ມມີຈຳນວນເຂົ້າຮ່ວມບໍ່ຈຳກັດ
- ຈະຕ້ອງຝຶກສ້າງບຸກຄົນຜູ້ທີ່ສາມາດນຳພາໃນແຕ່ລະບ້ານ,ໃຫ້ໄດ້1ຄົນເພື່ອເປັນຜູ້ຊີ້ນຳໃຫ້ຂໍ້ແນະນຳພາຍໃນໝວດຍ່ອຍລະຫວ່າງ 5 ຫາ 8 ຄອບຄົວ.
- ລົງເຮັດທົດລອງສາທິດ 1 ຄັ້ງ ກ່ຽວກັບການໃຊ້ຢາຂ້າຫຍ້າໃນແຕ່ລະບ້ານ.

- ຕິດຕາມພາກປະຕິບັດ ແລະ ໃຫ້ຂໍ້ແນະນຳໂດຍຜ່ານບຸກຄົນ ອສບ ຂອງບ້ານ
- ຕິດຕາມຜົນໄດ້ຮັບຂອງຊາວກະສິກອນ 4 ຫາ 5 ຄົນຕໍ່ບ້ານ.

<u>ດ້ານເຄື່ອງມືກະສິກຳ</u> :

- ປະກອບເຄື່ອງຍອດເມັດ 2 Semoirs 4 lignes
- ປະກອບເຄື່ອງຍອດເມັດ 1 semoirs 3 lignes
- ປະກອບເຄື່ອງຍອດເມັດໃຊ້ດ້ວຍແຮງງານຄົນ 45 ອັນ
- ເຄື່ອງພົ່ນຢາຂ້າຫຍ້າ 200 ລິດ ຈຳນວນ 2 ເຄື່ອງ
- ເຄື່ອງພົ່ນຢາຂ້າຫຍ້າ 20 ລິດ ຈຳນວນ 2 ເຄື່ອງ
- ຫົວສີດ 100 ອັນ.

<u>ດ້ານປັດໄຈການຜະລິດ</u> :

- ຊຸກຍູ້ປັດໄຈການຜະລິດ (ຢາຂ້າຫຍ້າຄິດໄລ່ດອກເບ້ຍ...2,5%) ສຳລັບເນື້ອທີ່ 15 ຮ.ຕ ຕໍ່ບ້ານ.
- ຈັດໃຫ້ມີລະບົບປ່ອຍສິນເຊື່ອຮ່ວມກັບພໍ່ຄ້າ.

<u>ເຂດເບີ 2</u> : ເຂດບ້ານ ຫ້ວຍຫລອດ, ຫ້ວຍເປັດ.

<u>ໜ້າວຽກຊຸກຍູ້ດ້ານເຕັກນິກ</u> :

- ຈຳນວນສາມາຊິກ ເຂົ້າຮ່ວມໃນກຸ່ມບໍ່ຈຳກັດຈຳນວນ
- ໃນແຕ່ລະກຸ່ມຍ່ອຍ 5-8 ຄອບຄົວຈະໄດ້ຮັບການຝຶກອົບຮົມ, ວິຊາການບ້ານ 1 ຄົນເປັນຜູ້ກຳກັບ.
- ເຮັດສາທິດວິທີໃຊ້ຢາຂ້າຫ້ຍາ 1 ເທື່ອ ຕໍ່ບ້ານ.
- ຕິດຕາມພາກປະຕິບັດຕົວຈິງ ແລະ ໃຫ້ຂໍ້ຄິດເຫັນ ແນະນຳ ຜ່ານວິຊາການບ້ານ.
- ຕິດຕາມຜົນໄດ້ຮັບພາຍໃນ 4-5 ຄອບຄົວຕໍ່ໜຶ່ງບ້ານ.

<u>ດ້ານເຄື່ອງມືກະສິກຳ :</u>

- ເຄື່ອງຢອດເມັດ 2 ແຖວ (ຕິດໃສ່ລົດໄຖນ້ອຍ)
- ເຄື່ອງຢອດເມັດດ້ວຍແຮງງານຄົນ 10 ເຄື່ອງ
- ເຄື່ອງພົ່ນຢາ 200 ລິດ 1ອັນ (ຕິດໃສ່ລົດໄຖ)
- ເຄື່ອງພົ່ນຢາ 20 ລິດ 1ອັນ
- ຫົວສີດ 25 ອັນ

<u>ດ້ານປັດໄຈການຜະລິດ</u> :

- ຊຸກຍູ້ບັນດາປັດໄຈການຜະລິດເຊັ່ນ : ຢາຂ້າຫ້ຍາ (ດອກເບ້ຍ 2,5%) ສຳລັບເນື້ອທີ່ 15 ຮ.ຕ ຕໍ່1 ບ້ານ.
- ຈັດຕັ້ງຮ່ວມກັບບັນດາພໍ່ຄ້າກ່ຽວກັບລະບົບຕອບສະໜອງສິນເຊື່ອ.

<u>ເຂດເປົ້າ 3</u> : **ບ້ານ ໜອງຜັກບົ້ງ, ບ້ານ ທ່ານາງ, ບ້ານ ນາກອກ ແລະ ບ້ານໃໝ່ໂພນໄຊ.**

<u>ວຽກຊຸກຍູ້ດ້ານເຕັກນິກ</u> :

- ຜູ້ເຂົ້າຮ່ວມກຸ່ມບໍ່ຈໍາກັດຈໍານວນ
- ຝຶກອົບຮົມ, ສ້າງວິຊາການບ້ານ ທີ່ມີຄວາມສາມາດ ໃຫ້ຂໍ້ແນະນໍາດ້ານເຕັກນິກ ໃຫ້ກຸ່ມຍ່ອຍ ຈໍານວນ 5-8 ຄົນໃນກຸ່ມໃຫ່ຍ.
- ເຮັດສາທິດທົດລອງ 1 ເທື່ອ ກ່ຽວກັບວິທີການຂ້າຫ້ຍາໃນແຕ່ລະບ້ານ.
- ຕິດຕາມພາກປະຕິບັດວຽກຂ້າຫ້ຍາ ແລະ ໃຫ້ຂໍ້ແນະນໍາຕໍ່ການປູກ ໂດຍຜ່ານວິຊາການບ້ານທີ່ຝຶກສ້າງມາແລ້ວ.

<u>**ຊຸກຍູ້ດ້ານອຸປະກອນຮັບໃຊ້ວຽກປູກຝັງ :**</u>

- ສະໜອງເຄື່ອງຈັກຢອດ 1 ເຄື່ອງ, ມີ 2 ແຖວ ເພື່ອຕິດຕັ້ງກັບລົດໄຖນານ້ອຍ.
- ສະໜອງເຄື່ອງຢອດເມັດດ້ວຍແຮງງານຄົນຈໍານວນ 20 ອັນ.
- ສະໜອງເຄື່ອງສີດຢາຂະໜາດ 200 ລິດ- 1 ເຄື່ອງ
- ສະໜອງເຄື່ອງສີດຢາຂະໜາດ 20 ລິດ -1 ເຄື່ອງ.
- ສະໜອງທົວສີດ 40 ອັນ.

<u>**ຊຸກຍູ້ປັດໄຈດ້ານການຜະລິດ**</u> :

- ຈັດຕັ້ງຮ່ວມກັບບັນດາພໍ່ຄ້າກ່ຽວກັບການສະໜອງສິນເຊື່ອ.

<u>ເຂດເປົ້າ 4</u> : **ບ້ານ ນາບົງ, ບ້ານ ຂອນແກ່ນ ແລະ ບັນດາ 3 ບ້ານຢູ່ເມືອງ ທົ່ງມີໄຊ.**

<u>ວຽກຊຸກຍູ້ດ້ານເຕັກນິກ</u> :

- ຈັດຕັ້ງກຸ່ມຜະລິດ 1 ກຸ່ມ ປະກອບມີສາມະຊິກສູງສຸດ 10 ຄົນ ໃນແຕ່ລະບ້ານ.
- ຝຶກອົບຮົມ, ກໍ່ສ້າງວິຊາການບ້ານ 1 ຄົນ ຕໍ່ 1 ກຸ່ມ
- ເຮັດສາທິດທົດລອງ 1 ຄັ້ງ ກ່ຽວກັບວິທີການຂ້າຫ້ຍາໃນແຕ່ລະບ້ານ
- ຕິດຕາມພາກປະຕິບັດ ແລະ ໃຫ້ຂໍ້ແນະນໍາດ້ານການປູກໂດຍຜ່ານວິຊາການບ້ານ
- ຕິດຕາມຜົນໄດ້ຮັບໃນແຕ່ລະບ້ານສໍາລັບເນື້ອທີ່ ປະມານ 4-5 ຄອບຄົວ.

<u>**ຊຸກຍູ້ວັດສະດຸຮັບໃຊ້ໃນການປູກ**</u> :

- ສະໜອງເຄື່ອງມືຢອດເມັດດ້ວຍແຮງງານຄົນ 35 ອັນ.
- ສະໜອງທົວສີດ 35 ອັນ

<u>**ຊຸກຍູ້ປັດໄຈການຜະລິດ**</u> :

- ຊຸກຍູ້ຢາຂ້າຫ້ຍາ, ອຸປະກອນ (ບໍ່ຈໍາເປັນທົດແທນຄືນດອກເບ້ຍ 0% ) ສໍາລັບເນື້ອທີ່ 2000 ມ$^2$ ຕໍ່ໜຶ່ງຄອບຄົວ.

## 3. ການດຳເນີນງານ/ແຫຼ່ງບຸກຄະລາກອນ

ໂຄງການ PASS ຈະໄດ້ຮັບການສະໜັບສະໜູນຊຸກຍູ້ຈາກໂຄງການ PRONAE ກ່ຽວກັບວິທີການຈັດຕັ້ງປະຕິບັດກິດຈະກຳທີ່ກ່າວມານີ້. ນັກວິຊາການດ້ານການກະເສດ 1 ຄົນ ທີ່ມີ ປະສົບການດີກ່ຽວກັບເຕັກນິກ SCV ຈະໃຫ້ມາເຮັດເຕັມເວລາຮ່ວມກັບໂຄງການ PASS .

ໜ້າທີ່ຂອງລາວແມ່ນເປັນຜູ້ປະສານງານທົ່ວໄປ ກ່ຽວກັບການສ້າງຕັ້ງກຸ່ມ ໃນ 4 ຕົວເມືອງ ແລະ ທັງເຮັດວຽກທ້າງຫາກະກຽມດ້ານວຽກຝຶກອົບຮົມ.ໃນວຽກຕົວຈິງລາວ ກໍຈະໄດ້ຮັບການ ຊຸກຍູ້ຈາກຊ່ຽວຊານທີ່ປຶກສາຂອງ ໂຄງການ PASS  ແລະ ໂຄງການ PRONAE ກໍຈະເບິ່ງຊ່ວຍລາວເປັນບາງຄັ້ງຄາວ.

ຢູ່ແຕ່ລະຕົວເມືອງຈະມີວິຊາການຈາກແຕ່ລະເມືອງ ເປັນຜູ້ຮັບຜິດຊອບການຈັດຕັ້ງກຸ່ມ, ການປຸກລະດົມ, ຊີ້ແຈງ, ອະທິບາຍ ແລະ ຕິດຕາມດ້ານເຕັກນິກໃນແຕ່ລະກຸ່ມ. ວິຊາການເມືອງຈະໄດ້ຮັບການຊຸກຍູ້ ດ້ານເຕັກນິກ ແລະ ຮ່ວມມືຈາກພະນັກງານວິຊາການຂອງໂຄງການ PASS .(ຜູ້ຮັບຜິດຊອບໃນແຕ່ລະເມືອງ) ແລະ ໄດ້ມີວິຊາການບ້ານໃນແຕ່ລະກຸ່ມບ້ານເຂົ້າຮ່ວມຊ່ວຍກ່ຽວກັບການຕິດຕາມດ້ານ ເຕັກນິກໃນແຕ່ລະກຸ່ມບ້ານ.

## 4. ຕາຕະລາງເວລາ

| ບັນດາໜ້າວຽກ | 2005<br>Déc | 2006<br>Jan | Fev | Mars | Avril | Mai | Juin | Juil | Août | Sept | Oct | Nov |
|---|---|---|---|---|---|---|---|---|---|---|---|---|
| **1. ເຄື່ອງມືຝຶກອົບຮົມ** | | | | | | | | | | | | |
| ຫລັກການ agro-techniques des SCV | ■ | | | | | | | | | | | |
| ບັນດາຜົນໄດ້ຮັບດ້ານ agro-économiques des SCV | ■ | | | | | | | | | | | |
| ການນຳໃຊ້ຢາຂ້າຫຍ້າແບບລົມເພດລົມຜົນ | ■ | | | | | | | | | | | |
| **2. .ຝຶກອົບຮົມວິຊາການເມືອງ** | | | | | | | | | | | | |
| ບັນດາຫຼັກການພື້ນຖານຂອງ SCV | | ■ | | | | | | | | | | |
| ການນຳໃຊ້ເຄື່ອງມືສຳລັບຝຶກອົບຮົມ | | ■ | | | | | | | | | | |
| **3. .ສາທິດກິດຈະກຳຂອງໂຄງການຕໍ່ບ້ານເປົ້າໝາຍ** | | | | | | | | | | | | |
| ຈັດປະຊຸມບ້ານໃນ 21 ບ້ານເປົ້າໝາຍ | | ■ | ■ | | | | | | | | | |
| **4. ຈັດຕັ້ງ/ປະກອບໂຄງສ້າງການຈັດຕັ້ງກຸ່ມ** | | | | | | | | | | | | |
| ຈັດຕັ້ງກຸ່ມຍ່ອຍ ແລະ ຄຸ້ມຄອງ ວັດສະດຸ ຮັບໃຊ້ການປູກຝັງ | | | ■ | ■ | ■ | | | | | | | |
| ຈັດລະບົບໂຄງສ້າງດ້ານສະໜອງປັດໄຈ ການຜະລິດ | | | | ■ | ■ | ■ | | | | | | |
| **5. ຝຶກອົບຮົມ/ສ້າງວິຊາການບ້ານ** | | | | | | | | | | | | |
| ຝຶກອົບຮົມວິຊາການ SCV ແລະ ການປະ ລົມຢາຂ້າຫຍ້າ | | | | ■ | ■ | | | | | | | |
| **6. .ຊຸກຍູ້ດ້ານເຕັກນິກ ແລະ ຕິດຕາມ** | | | | | | | | | | | | |
| ຝຶກອົບຮົມຊາວກະສິກອນກ່ຽວກັບວິທີການ ຂ້າຫຍ້າ | | | | | ■ | | | | | | | |
| ເຮັດທົດລອງສາທິດພາກປະຕິບັດຢູ່ທົ່ງນາ ຊາວບ້ານ | | | | | | ■ | | | | | | |
| ຕິດຕາມການຂ້າຫຍ້າຂອງຊາວກະສິກອນ | | | | | | ■ | ■ | | | | | |
| ຕິດຕາມຜົນໄດ້ຮັບພາກປະຕິບັດ ແລະ ໃຫ້ຂໍ້ ແນະນຳ | | | | | | ■ | ■ | ■ | | | | |
| ໃຫ້ຂໍ້ແນະນຳດ້ານການປູກ ແລະຕິດຕາມ ຜົນໄດ້ຮັບໃນແຕ່ລະແປງ | | | | | | ■ | ■ | ■ | ■ | ■ | ■ | ■ |
| ຕິດຕາມກຸ່ມຜະລິດໃນແຕ່ລະບ້ານ (4 ຄອບຄົວຕໍ່ບ້ານ) | | | | | | | | | | ■ | ■ | ■ |